ສປປ ລາວ (ລຳດັບ 2: ໄລຍະເຝົ້າລະວັງ "Tier 2 Watch List")

ລັດຖະບານ ແຫ່ງ ສປປ ລາວ ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມມາດຖານຂັ້ນຕ່ຳສຸດ ທີ່ໄດ້ກຳນົດໄວ້ ໃນການລຶບລ້າງ ຂະບວນການຄ້າມະນຸດ ແຕ່ເຮັດໃຫ້ເຫັນວ່າມີຄວາມພະຍາຍາມຈະແກ້ໄຂບັນຫານີ້ ຢ່າງຈິງຈັງ ແລະ ໄດ້ມີຜົນໄດ້ຮັບທີ່ສຳຄັນຈຳນວນໜຶ່ງ ໃນໄລຍະຂອງການລາຍງານ. ດັ່ງນັ້ນ ສປປ ລາວ ຖືກປັບຂຶ້ນໃຫ້ຢູ່ໃນໄລຍະເຝົ້າລະວັງ 02 ຫຼື (TIER 2 Watch List). ບັນດາຜົນໄດ້ຮັບດັ່ງກ່າວນັ້ນ ລວມມີທັງການຊິດເຊີຍຕໍ່ຜູ້ທີ່ຖືກເຄາະຮ້າຍ ຫຼື ເຫຍື່ອຂອງການຄ້າມະນຸດຈຳນວນໜຶ່ງໂດຍຜ່ານຂະບວນການຍຸຕິທຳທາງອາຍາ; ການໃຫ້ການບໍລິການໂດຍກົງຕໍ່ຜູ້ທີ່ຖືກເຄາະຮ້າຍ, ລວມທັງຜູ້ຖືກເຄາະຮ້າຍທີ່ເປັນເພດຊາຍ ເຊິ່ງຖືວ່າເປັນຄັ້ງທຳອິດ; ການອອກດຳລັດໃນເດືອນກໍລະກົດ ເຊິ່ງໄດ້ກຳນົດການສ້າງຕັ້ງຄະນະກຳມະການຊີ້ນຳດ້ານການຕ້ານການຄ້າມະນຸດທີ່ປະກອບດ້ວຍຫຼາຍພາກສ່ວນໃນຂັ້ນແຂວງ ແລະ ທ້ອງຖິ່ນ; ແລະ ການຈັດຕັ້ງປະຕິບັດທີ່ເພີ່ມຂຶ້ນໃນດ້ານການຝຶກອົບຮົມ ແລະ ການສ້າງຄວາມຮັບຮູ້ໃນຂັ້ນທ້ອງຖິ່ນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດດຳລັດດັ່ງກ່າວ. ເຖິງແມ່ນວ່າຈະມີຜົນສຳເລັດດັ່ງທີ່ກ່າວມາກໍ່ຕາມ, ລັດຖະບານ ລາວຍັງຄົງສືບຕໍ່ປະເຊີນກັບຄວາມທ້າທາຍໃນການກຳນົດຕົວຜູ້ທີ່ຖືກເຄາະຮ້າຍທັງຄົນລາວ ແລະ ຄົນຕ່າງປະເທດທີ່ຖືກຄ້າຢູ່ພາຍໃນປະເທດລາວ ໂດຍສະເພາະເຫັນວ່າມີຄວາມກັງວົນທີ່ເພີ່ມຂຶ້ນກ່ຽວກັບຄວາມສ່ຽງຂອງການຄ້າມະນຸດໃນເຂດເສດຖະກິດພິເສດ, ສວນກະສິກຳ ແລະ ໃນບັນດາໂຄງການພື້ນຖານໂຄງລ່າງຂະໜາດໃຫຍ່. ຖ້າມກາງການປະສານງານທີ່ອາດຍັງເຮັດບໍ່ໄດ້ດີລະຫ່ວາງບັນດາກະຊວງຕ່າງໆ, ບັນດານະ�โยบายທີ່ອາດມີຂໍ້ຈຳກັດຕໍ່ຜູ້ສະໜອງການບໍລິການທີ່ບໍ່ແມ່ນພາກລັດ ຍັງຄົງສືບຕໍ່ບໍ່ອຳນວຍຄວາມສະດວກໃຫ້ຄວາມພະຍາຍາມໃນການປົກປ້ອງທີ່ມີປະສິດທິພາບ ແລະ ການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດ ຂອງ ສປປ ລາວ ເພື່ອຕ້ານການຄ້າມະນຸດ.

ຂໍ້ສະເໜີແນະທີ່ເປັນບຸລິມະສິດ:

ເພີ່ມທະວີຄວາມພະຍາຍາມໃນການເຜີຍແຜ່, ຈັດຕັ້ງປະຕິບັດ ແລະ ສະໜອງການຝຶກອົບຮົມໃຫ້ແກ່ບັນດາເຈົ້າໜ້າທີ່ຕຳຫຼວດ ແລະ ເຈົ້າໜ້າທີ່ຊາຍແດນກ່ຽວກັບຂໍ້ແນະນຳແຫ່ງຊາດສຳລັບການປົກປ້ອງຜູ້ທີ່ຖືກເຄາະຮ້າຍ ໂດຍເນັ້ນໜັກໃສ່ກຸ່ມທີ່ມີຄວາມສ່ຽງ. • ຊອກຫາບັນດາຕົວຊີ້ວັດຂອງການຄ້າມະນຸດໃນບັນດາກຸ່ມຄົນທີ່ມີຄວາມສ່ຽງ, ລວມທັງແຕ່ກໍ່ບໍ່ຈຳກັດສະເພາະແຕ່ແຮງງານຕ່າງດ້າວ, ຊາຍໜຸ່ມ ແລະ ເດັກຊາຍຄົນລາວທີ່ກຳລັງເຮັດວຽກໃນຂົງເຂດໂຄງການຂະໜາດໃຫຍ່ກ່ຽວກັບພື້ນຖານໂຄງລ່າງ, ບໍ່ແຮ່ ແລະ ກະສິກຳ ແລະ ຜູ້ທີ່ກັບຄືນມາຈາກການໄປເຮັດວຽກຢູ່ຕ່າງປະເທດ, ແລະ ໃນບັນດາກຸ່ມຜູ້ຍິງຕ່າງດ້າວ ແລະ ຜູ້ຍິງລາວທີ່ມີສ່ວນຮ່ວມໃນການຄ້າປະເວນີພາຍໃນປະເທດ. • ເສີມສ້າງຄວາມເຂັ້ມ ແຂງທາງດ້ານຄວາມພະຍາຍາມໃນການສ້າງຄວາມຮັບປະກັນດ້ານຄວາມປອດໄພ, ເຮັດໃຫ້ເປັນທາງການ, ແລະ ການຕິດຕາມກວດກາການຂ້າມຊາຍແດນໃນເຂດພື້ນທີ່ຫ່າງໄກ ແລະ ເປັນພູເຂົາ ເຊິ່ງໂດຍທົ່ວໄປຈະຖືກນຳໃຊ້ໂດຍແຮງງານເຄື່ອນຍ້າຍທີ່ເປັນຄົນລາວ ເພື່ອກັບຈາກການໄປເຮັດວຽກຢູ່ຕ່າງປະເທດ ແລະ ດຳເນີນການຊອກຫາບັນດາຕົວຊີ້ວັດການຄ້າມະນຸດໃນບັນດາກຸ່ມຄົນດັ່ງກ່າວ. • ສະໜອງການຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍໃນຂັ້ນສູນກາງ ແລະ ທ້ອງຖິ່ນກ່ຽວກັບປະມວນກົດໝາຍອາຍາຂອງ ສປປ ລາວ ສະບັບປັບປຸງ ເພື່ອເສີມສ້າງຄວາມສາມາດຂອງພວກເຂົາໃນການສືບສວນ, ດຳເນີນຄະດີ ແລະ ຕັດສິນລົງໂທດພວກຄ້າມະນຸດ ລວມທັງບັນດາເຈົ້າໜ້າທີ່ຜູ້ສົມຮູ້

ຮ່ວມຄິດ ແລະ ນັກທ່ອງທ່ຽວເພື່ອຈຸດປະສົງມີເພດສຳພັນກັບເດັກ. • ຮ່ວມມືກັບອົງການຈັດຕັ້ງທາງສັງຄົມ ເພື່ອປັບປຸງ ແລະ ຜັນຂະຫຍາຍແຜນດຳເນີນງານແຫ່ງຊາດຫຼັງປີ 2020, ເອົາໃຈໃສ່ຕໍ່ກັບແນວໂນ້ມທີ່ມີການປ່ຽນແປງ ແລະ ຄວາມສ່ຽງຕໍ່ການຄ້າມະນຸດ. • ເພີ່ມທະວີຄວາມພະຍາຍາມ ແລະ ຊັບພະຍາກອນຂອງລັດຖະບານທີ່ທຸ້ມເທໃຫ້ແກ່ການສະໜອງການບໍລິການ ແລະ ສ້າງແຜນງານການຊ່ວຍເຫຼືອຜູ້ທີ່ຕົກເປັນເຫຍື່ອ, ແລະ ຂະຫຍາຍການບໍລິການເຫຼົ່ານັ້ນໄປສູ່ຜູ້ຖືກເຄາະຮ້າຍທີ່ເປັນເພດຊາຍ. ຄວນຍຸດຕິຂໍ້ກຳນົດທີ່ວ່າ ຜູ້ທີ່ຖືກເຄາະຮ້າຍຕ້ອງດຳເນີນການຂໍການຊົດເຊີຍຢ່າງເປັນທາງການ ເພື່ອທີ່ພວກເຂົາຈະໄດ້ຮັບການຊົດເຊີຍຈາກພວກຄ້າມະນຸດທີ່ກະທຳຕໍ່ພວກເຂົາ. • ສົມທົບກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອເພີ່ມທະວີຊັບພະຍາກອນ ແລະ ການຝຶກອົບຮົມວິຊາຊີບ ເພື່ອສະໜັບສະໜູນຜູ້ຖືກເຄາະຮ້າຍ ລວມທັງຜູ້ຖືກເຄາະຮ້າຍທີ່ເປັນເພດຊາຍ ເພື່ອໃຫ້ພວກເຂົາສາມາດກັບຄືນສູ່ສັງຄົມ ແລະ ບ້ານເກີດເມືອງນອນຂອງພວກເຂົາໄດ້ເປັນປົກກະຕິ. • ສືບຕໍ່ປັບປຸງທາງດ້ານຄວາມໂປ່ງໃສໂດຍຜ່ານການເກັບກຳຂໍ້ມູນກ່ຽວກັບບັນດາກິດຈະກຳສະກັດກັ້ນການຄ້າມະນຸດຂອງລັດຖະບານ, ລວມທັງລາຍລະອຽດຂອງຄະດີ ແລະ ການຈັດສັນທາງດ້ານການເງິນ, ແລະ ແບ່ງປັນຂໍ້ມູນເຫຼົ່ານັ້ນກັບບັນດາກະຊວງທີ່ກ່ຽວຂ້ອງ ແລະ ບັນດາຜູ້ທີ່ມີສ່ວນຮ່ວມທີ່ບໍ່ແມ່ນພາກລັດ. • ເສີມສ້າງຄວາມເຂັ້ມແຂງທາງດ້ານຄວາມພະຍາຍາມໃຫ້ສະຖານທູດ, ກົງສູນໃນຕ່າງປະເທດ ເພື່ອລະບຸຕົວ ແລະ ໃຫ້ຄວາມຊ່ວຍ ເຫຼືອແກ່ຄົນລາວຜູ້ທີ່ຕົກເປັນເຫຍື່ອ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເພື່ອການຂູດຮີດທາງເພດ ແລະ ແຮງງານ.

ການດຳເນີນຄະດີ

ລັດຖະບານໄດ້ເພີ່ມຄວາມພະຍາຍາມໃນການບັງຄັບໃຊ້ກົດໝາຍ. ໃນເດືອນພະຈິກ 2018, ລັດຖະບານໄດ້ປະກາດນຳໃຊ້ປະມວນກົດໝາຍອາຍາສະບັບປັບປຸງໃໝ່. ມາດຕາ 215 ຂອງປະມວນກົດໝາຍອາຍາປີ 2018 ໄດ້ກຳນົດການຄ້າມະນຸດເພື່ອການຂູດຮີດທາງເພດ ແລະ ການຄ້າມະນຸດເພື່ອການຂູດຮີດແຮງງານໃຫ້ເປັນການກະທຳຜິດທາງອາຍາ ແລະ ໄດ້ເພີ່ມການວາງໂທດຕັດອິດສະຫຼະພາບເປັນ 5 ຫາ 15 ປີ ແລະ ໂທດປັບໄໝແຕ່ 10 ລ້ານ ຫາ 100 ລ້ານກີບ(1,170 ຫາ 11,720 ໂດລາ); ຖ້າວ່າການກະທຳຜິດຫາກລວມມີຜູ້ຖືກເຄາະຮ້າຍທີ່ເປັນເດັກ, ໂທດປັບໄໝແມ່ນເພີ່ມເປັນ 100 ລ້ານ ຫາ 500 ລ້ານກີບ (11,720 ຫາ 58,580 ໂດລາ). ການວາງໂທດດັ່ງກ່າວນີ້ຖືວ່າມີຄວາມເຂັ້ມງວດພຽງພໍ ໂດຍສະເພາະແມ່ນຕໍ່ກັບການຄ້າມະນຸດເພື່ອຂູດຮີດທາງເພດແມ່ນຖືວ່າທຽບເທົ່າກັບການວາງໂທດຕໍ່ກັບອາຊະຍາກຳຮ້າຍແຮງອື່ນໆ ເຊັ່ນ ການຂົ່ມຂືນ. ໃນປີ 2018, ກົມຕ້ານການຄ້າມະນຸດ (ATD) ທີ່ນອນຢູ່ໃນກະຊວງປ້ອງກັນຄວາມສະຫງົບ ໄດ້ລາຍງານວ່າ ມີການສືບສວນ 39 ກໍລະນີທີ່ກ່ຽວຂ້ອງກັບການຄ້າມະນຸດ (ມີ 69 ກໍລະນີໃນປີ 2017), ສິ່ງຜົນໃຫ້ມີການເປີດການສືບສວນຄະດີການຄ້າມະນຸດຈຳນວນ 26 ຄະດີ (ມີ 44 ຄະດີ ໃນປີ 2017). ໃນຊ່ວງທ້າຍປີ, ຍັງຄົງມີການສືບສວນ 18 ກໍລະນີທີ່ກຳລັງຖືກດຳເນີນການ (ມີ 29 ກໍລະນີໃນປີ 2017, 19 ກໍລະນີໃນປີ 2016). ເຈົ້າໜ້າທີ່ໄດ້ເລີ່ມຕົ້ນດຳເນີນການຕາມກົດໝາຍຕໍ່ກັບ 12 ຄະດີການຄ້າມະນຸດ ເຊິ່ງມີຜູ້ຖືກສົງໄສຄ້າມະນຸດທີ່ບໍ່ຮູ້ຈຳນວນ (ມີ 13 ຄະດີໃນປີ 2017, 11 ຄະດີໃນປີ 2016) ແລະ ໄດ້ຕັດສິນການກະທຳຜິດຕໍ່ກັບຜູ້ຄ້າມະນຸດຈຳນວນ 27 ຄົນ ໃນ 11 ຄະດີ (ມີການຕັດສິນການກະທຳຜິດ 8 ຄະດີໃນປີ 2017 ແລະ 6 ຄະດີໃນປີ 2016). ການຕັດສິນຄວາມຜິດລວມມີຢ່າງໜ້ອຍໜຶ່ງຄະດີທີ່ກ່ຽວຂ້ອງກັບການຄ້າມະນຸດເພື່ອການຂູດຮີດທາງເພດຕໍ່ເດັກນ້ອຍ, ແລະ ມີຢ່າງໜ້ອຍໜຶ່ງຄະດີ

ການຄ້າມະນຸດເພື່ອການຂູດຮີດແຮງງານຄົນລາວຢູ່ຕ່າງປະເທດ. ມີ 9 ຄະດີ ທີ່ບໍ່ຈະແຈ້ງວ່າສອດ ຄ່ອງກັບຄຳນິຍາມ ຕາມກົດໝາຍວ່າເປັນກໍລະນີການຄ້າມະນຸດຫຼືບໍ່; ຈຳນວນ 8 ໃນ 9 ຄະດີດັ່ງກ່າວປະກອບມີອົງປະ ກອບທີ່ມີຄວາມ ເປັນໄປໄດ້ຂອງການບັງຄັບແຕ່ງງານ ຫຼື ການແຕ່ງງານແອບແຝງຂອງແມ່ຍິງລາວກັບຜູ້ຊາຍສັນຊາດຈີນ. ການວາງໂທດ ຕັດອິດສະຫຼະພາບຕໍ່ການກະທຳຜິດເຫຼົ່ານັ້ນແມ່ນມີຕັ້ງແຕ່ 1 ປີ 1 ເດືອນ ຫາ 15 ປີ 6 ເດືອນ, ແລະ ໂທດປັບໄໝແມ່ນ ເລີ່ມແຕ່ 2 ລ້ານ ຫາ 100 ລ້ານກີບ (234 ຫາ 11,720 ໂດລາ). ສານໄດ້ອອກຄຳສັ່ງຮິບຊັບສິນເປັນຈຳນວນ 70 ລ້ານ ກີບ (8,200 ໂດລາ) ຈາກພວກຄ້າມະນຸດ. ສານໄດ້ອອກຄຳສັ່ງໃຫ້ມີການຊົດເຊີຍຄ່າເສຍຫາຍ 6 ຄະດີ, ການຍຶດຊັບ ສິນແຕ່ 6 ລ້ານ ຫາ 110.25 ລ້ານກີບ (702 ຫາ 12,920 ໂດລາ) ແລະ ໄດ້ດຳເນີນການຈັດແບ່ງຈຳນວນເງິນຊົດເຊີຍ ໃຫ້ແກ່ຜູ້ທີ່ຖືກເຄາະຮ້າຍໃນແຕ່ລະຄະດີ. ລັດຖະບານບໍ່ໄດ້ໃຫ້ຂໍ້ມູນກ່ຽວກັບການດຳເນີນຄະ ດີຕໍ່ກັບຊາວຕ່າງຊາດໃນ ປະເທດລາວ ທີ່ມີສ່ວນກ່ຽວພັນກັບການທ່ອງທ່ຽວເພື່ອການມີເພດສຳພັນກັບເດັກ. ເຖິງຢ່າງໃດກໍ່ຕາມ, ປະມວນກົດໝ ายอายาปี 2018 ໄດ້ເພີ່ມມາດຕາ 262 ເຊິ່ງໄດ້ກຳນົດຄວາມຜິດທາງອາຍາຕໍ່ກັບການເດີນທາງຈາກປະເທດໃດໜຶ່ງໄປ ຍັງປະເທດ ຫຼື ສະຖານທີ່ອື່ນ ເພື່ອມີເພດສຳພັນກັບເດັກ. ບັນດາໜ່ວຍງານໄກ່ເກ່ຍຂັ້ນບ້ານມັກຈະເປັນຜູ້ຈັດການກັບຂໍ້ ຮ້ອງຮຽນຂອງພົນລະເມືອງຫຼາຍກ່ວາລະບົບຍຸຕິທຳທາງການ; ໄດ້ມີການລາຍງານວ່າ ໜ່ວຍງານໄກ່ເກ່ຍຂັ້ນບ້ານ ໄດ້ດຳ ເນີນການແກ້ໄຂຂໍ້ຮ້ອງຮຽນຈຳນວນໜຶ່ງທີ່ກ່ຽວຂ້ອງກັບການຄ້າມະນຸດດ້ວຍຕົນເອງ ໂດຍບໍ່ໄດ້ສົ່ງເລື່ອງໄປຍັງໜ່ວຍງານ ບັງຄັບໃຊ້ກົດໝາຍ.

ກອງເລຂາຕ້ານການຄ້າມະນຸດ ແລະ ຄະນະກຳມະການຊີ້ນຳລະດັບຊາດ ໄດ້ສືບຕໍ່ສະໜອງການຝຶກອົບຮົມໃຫ້ແກ່ເຈົ້າ ໜ້າທີ່ບັງຄັບໃຊ້ກົດໝາຍ, ແລະ ໃນໄລຍະຂອງການລາຍງານນີ້ ກອງເລຂາດັ່ງກ່າວໄດ້ມີການສະໜອງງົບປະມານໂດຍ ກົງໃຫ້ແກ່ການຝຶກອົບຮົມຈຳນວນໜຶ່ງ, ໃນຂະນະດຽວກັນກໍ່ໄດ້ມີການຮ່ວມມືກັບອົງການຈັດຕັ້ງສາກົນຈຳນວນໜຶ່ງ. ເຈົ້າໜ້າທີ່ໄດ້ຈັດຕັ້ງເຜີຍແຜ່ບັນດາຂໍ້ແນະນຳໃນການຈັດການກັບກໍລະນີ/ຄະດີຄ້າມະນຸດ ທີ່ໄດ້ຖືກພັດທະນາຂຶ້ນຮ່ວມ ກັບອົງການຈັດຕັ້ງສາກົນ, ແລະ ຝຶກອົບຮົມການນຳໃຊ້ຄູ່ມືດຳເນີນຄະດີການຄ້າມະນຸດໃຫ້ແກ່ຜູ້ພິພາກສາ ແລະ ຜູ້ຊ່ວຍ ຜູ້ພິພາກສາໃນທົ່ວປະເທດ. ກະຊວງປ້ອງກັນຄວາມສະຫງົບ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ແລະ ເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ ກໍ່ໄດ້ຈັດຕັ້ງ ຫຼື ເຂົ້າຮ່ວມການຝຶກອົບຮົມກ່ຽວກັບການກຳນົດຕົວຜູ້ຖືກເຄາະຮ້າຍ, ທັກສະໃນການສຳພາດ, ແລະ ການສົ່ງຕໍ່ ແລະ ສະໜອງການບໍລິການສຳລັບຜູ້ຖືກເຄາະຮ້າຍ. ກະຊວງຍຸຕິທຳໄດ້ ຈັດການຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດ, ຕຸລາການ ແລະ ເຈົ້າໜ້າທີ່ສະຫວັດດີການສັງຄົມ ເພື່ອເຜີຍແຜ່ຂໍ້ມູນທາງ ກົດໝາຍທີ່ກ່ຽວຂ້ອງກັບການຄ້າມະນຸດ. ບັນດາໜ່ວຍງານບັງຄັບໃຊ້ກົດໝາຍຂອງລາວໄດ້ສືບຕໍ່ການຮ່ວມມືຫຼາຍຝ່າຍ ກັບບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມມື ໃນປະເທດກຳປູເຈຍ, ຈີນ, ມະເລເຊຍ, ໄທ ແລະ ຫວຽດນາມ ເພື່ອດຳເນີນການສືບສວນຄະດີການຄ້າມະນຸດຂ້າມຊາດ ແລະ ໂອກາດດ້ານການຝຶກອົບຮົມທີ່ກ່ຽວຂ້ອງ. ຢ່າງໜ້ອຍມີ ໜຶ່ງກໍລະນີຂອງການຮ່ວມມືນີ້ ໄດ້ນຳໄປສູ່ການຕັດສິນການກະທຳຜິດຂອງຜູ້ຄ້າມະນຸດໜຶ່ງລາຍໃນປະເທດໄທ ເຊິ່ງໄດ້ມີ ການຂູດຮີດແຮງງານທີ່ເປັນຄົນລາວໜຶ່ງຄົນໃນອຸດສາຫະກຳການປະມົງ.

ບັນດາອົງການຈັດຕັ້ງ ແລະ ສື່ມວນຊົນທີ່ເຮັດວຽກກ່ຽວກັບວຽກງານຕ້ານການຄ້າມະນຸດ ໄດ້ລາຍງານວ່າເຈົ້າໜ້າທີ່ຂັ້ນ ນ້ອຍຈຳນວນໜຶ່ງ ຍັງຮັບສິນບົນຈາກຜູ້ກະທຳຜິດໃນການຄ້າມະນຸດ ເພື່ອອຳນວຍຄວາມສະດວກໃນການກວດຄົນເຂົ້າ-

ອອກເມືອງ ແລະ ການຂົນສົ່ງເດັກຍິງ ໄປ ສປ ຈີນ ໂດຍນຳໃຊ້ເອກະສານເດີນທາງປອມ. ຜູ້ສັງເກດການຍັງໄດ້ລະບຸວ່າ ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ຍັງໃຫ້ການຊ່ວຍເຫຼືອຂະບວນການລັກລອບຂົນສົ່ງແຮງງານຜິດກົດໝາຍທີ່ບໍ່ມີເອກະສານອະນຸຍາດໃດໆ ຈາກປະເທດຫວຽດນາມ ແລະ ຈີນ ເພື່ອມາເຮັດວຽກເປັນກຳມະກອນໃນໂຮງຈັກໂຮງງານຂະໜາດໃຫຍ່, ຕາມໂຄງການບໍ່ແຮ່, ໂຄງການກະສິກຳ ໃນ ສປປ ລາວ, ເຊິ່ງໃນບາງຈຳນວນຂອງພວກກ່ຽວນັ້ນ ອາດຕົກເປັນເຫຍື່ອການຄ້າມະນຸດ. ເຖິງແມ່ນວ່າຈະມີຂໍ້ກ່າວຫາດັ່ງກ່າວກໍ່ຕາມ, ລັດຖະບານລາວຍັງບໍ່ສາມາດໃຫ້ລາຍລະ ອຽດຕໍ່ການດຳເນີນການສືບສວນ-ສອບສວນ, ການດຳເນີນຄະດີ, ການລົງໂທດຕໍ່ເຈົ້າໜ້າທີ່ ທີ່ກະທຳຄວາມຜິດໃນການສົມຮູ້ຮ່ວມຄິດຄະດີການຄ້າມະນຸດ ແລະ ຄະດີອື່ນໆທີ່ກ່ຽວຂ້ອງກັບການຄ້າມະນຸດໃນໄລຍະປີຜ່ານມາ.

ການຄຸ້ມຄອງ

ລັດຖະບານຍັງຄົງຮັກສາຄວາມພະຍາຍາມໃນການປົກປ້ອງຜູ້ທີ່ຖືກເຄາະຮ້າຍ. ໃນການເສີມຂະຫຍາຍເນື້ອໃນກອງປະຊຸມການປະສານງານລະດັບລັດຖະມົນຕີໃນອະນຸພາກພື້ນແມ່ນ້ຳຂອງເພື່ອຕ້ານການຄ້າມະນຸດ (COMMIT) ໃນປີ 2016, ລັດຖະບານໄດ້ລາຍງານກ່ຽວກັບການເຜີຍແຜ່ ແລະ ຈັດຕັ້ງປະຕິບັດຄູ່ມືສຳລັບການກຳນົດ ແລະ ລະບຸຕົວຜູ້ຖືກເຄາະຮ້າຍໃຫ້ແກ່ເຈົ້າໜ້າທີ່ຂອງບັນດາໜ່ວຍງານທີ່ກ່ຽວຂ້ອງ ນອກເໜືອຈາກເຈົ້າໜ້າທີ່ຂອງກົມຕ້ານການຄ້າມະນຸດ ລວມທັງເຈົ້າໜ້າທີ່ຊາຍແດນທີ່ປະຈຳການຢູ່ຕາມພື້ນທີ່/ຊຸມຊົນທີ່ມີຄວາມສ່ຽງ. ເປັນຄັ້ງທຳອິດທີ່ລັດຖະບານໄດ້ສະໜອງຄວາມຊ່ວຍເຫຼືອຢ່າງເປັນທາງການ ລວມທັງທີ່ພັກອາໄສໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ເປັນເພດຊາຍ ເຖິງວ່າການບໍລິການແມ່ນມີສຳລັບຜູ້ຍິງເປັນສ່ວນໃຫຍ່. ເຖິງຢ່າງໃດກໍ່ຕາມ, ລັດຖະບານບໍ່ໄດ້ນຳໃຊ້ມາດຕະການຢ່າງພຽງພໍເພື່ອກຳນົດຕົວຜູ້ຖືກເຄາະຮ້າຍທັງຄົນພາຍໃນ ແລະ ຄົນຕ່າງປະເທດ.

ເຈົ້າໜ້າທີ່ບໍ່ໄດ້ລາຍງານກ່ຽວກັບຕົວເລກທີ່ຈະແຈ້ງຂອງຜູ້ເຄາະຮ້າຍທີ່ໄດ້ຖືກກຳນົດຕົວ (ມີ 86 ຄົນໃນປີ 2017 ແລະ 184 ຄົນໃນປີ 2016). ເຖິງຢ່າງໃດກໍ່ຕາມ, ສະຫະພັນແມ່ຍິງລາວ ໄດ້ລາຍງານວ່າ ໄດ້ມີການສະໜອງການບໍລິການ ລວມທັງທີ່ພັກອາໄສໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຈຳນວນ 52 ຄົນ ໃນລະຫ່ວາງປີ 2018 ລວມທັງຜູ້ທີ່ຖືກເຄາະຮ້າຍຈາກການຂູດຮີດທາງເພດ ແລະ ແຮງງານໃນຕ່າງປະເທດຈຳນວນ 47 ຄົນ ແລະ ຜູ້ທີ່ຖືກເຄາະຮ້າຍຈຳນວນ 5 ຄົນ ໄດ້ຖືກລະບຸຕົວພາຍໃນປະເທດ; ຜູ້ຖືກເຄາະຮ້າຍທັງໝົດທີ່ໄດ້ຮັບການສະໜອງການບໍລິການແມ່ນພົນລະເມືອງລາວ. ເຈົ້າໜ້າທີ່ໄດ້ລາຍງານກ່ຽວກັບການຈັດຕັ້ງຄູ່ມືການປົກປ້ອງຜູ້ຖືກເຄາະຮ້າຍ ລວມທັງການດຳເນີນການ ໃນພື້ນທີ່ຊາຍແດນບ່ອນທີ່ມີຄວາມສ່ຽງຕໍ່ການຄ້າມະນຸດ. ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດສະບັບປີ 2016 ໄດ້ກຳນົດສິດຂອງຜູ້ຖືກເຄາະຮ້າຍຕໍ່ການໄດ້ຮັບທີ່ພັກເຊົາຊົ່ວຄາວ, ການໄດ້ຮັບຄຳປຶກສາທາງດ້ານກົດໝາຍ, ການດູແລສຸຂະພາບ, ການສຶກສາ ຫຼື ການຝຶກອົບຮົມວິຊາຊີບ ແລະ ຄວາມຊ່ວຍເຫຼືອທາງການເງິນ ເພື່ອການກັບຄືນສູ່ສັງຄົມຂອງພວກເຂົາ. ສະຫະພັນແມ່ຍິງລາວ ເຊິ່ງມີໜ້າທີ່ຮັບຜິດຊອບໃນການສະໜອງການບໍລິການຂອງລັດຖະບານ, ໄດ້ສ້າງຕັ້ງສູນພັກເຊົາຊົ່ວຄາວໜຶ່ງແຫ່ງທີ່ວຽງຈັນ ສຳລັບຜູ້ທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ເຊິ່ງສູນພັກເຊົາດັ່ງກາວກໍ່ໄດ້ໃຫ້ການບໍລິການແກ່ຜູ້ທີ່ຖືກເຄາະຮ້າຍຈາກການຄ້າມະນຸດເຊັ່ນກັນ. ໃນລະຫ່ວາງການກວດລ້າງຄັ້ງໃຫຍ່ເພື່ອປາບປາມການຄ້າປະເວນີໃນນະຄອນຫຼວງວຽງຈັນໃນເດືອນຕຸລາ 2018, ເຈົ້າໜ້າທີ່ຕຳຫຼວດໄດ້ດຳເນີນການກັກຕົວຜູ້ຍິງຈຳ

ນອນ 128 ຄົນ ລວມທັງຄົນຕ່າງດ້າວ 35 ຄົນ ແຕ່ຕຳຫຼວດກໍບໍ່ໄດ້ດຳເນີນການກວດກາເປັນລາຍບຸກຄົນ ເພື່ອຄົ້ນຫາວ່າພວກເຂົາເປັນຜູ້ຖືກເຄາະຮ້າຍຂອງການຄ້າມະນຸດຫຼືບໍ່. ໄດ້ມີການລາຍງານວ່າ ຕຳຫຼວດໄດ້ດຳເນີນການລະບຸຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເພື່ອການຂູດຮີດທາງເພດຈຳນວນ 4 ຄົນ ເຊິ່ງພວກເຂົາໄດ້ກັບຄືນບ້ານເຮືອນໂດຍບໍ່ໄດ້ອ້າງອີງເຖິງການບໍລິການໃດໆ. ຜູ້ຖືກເຄາະຮ້າຍຈຳນວນໜຶ່ງໄດ້ຮັບຄວາມຊ່ວຍເຫຼືອ ໂດຍການຊົດເຊີຍຄືນຜ່ານຂະບວນການຍຸຕິທຳທາງອາຍາ; ເຖິງຢ່າງໃດກໍ່ຕາມ, ສານບໍ່ໄດ້ຕັດສິນການຢຽວຢາ ຫຼື ການຊົດເຊີຍ ນອກຈາກວ່າຜູ້ຖືກເຄາະຮ້າຍໄດ້ມີການຮ້ອງຂໍແບບສະເພາະເຈາະຈົງ. ເຈົ້າໜ້າທີ່ຊາຍແດນບໍ່ໄດ້ດຳເນີນການກວດກາຢ່າງພຽງພໍຕໍ່ກັບແຮງງານເຄື່ອນຍ້າຍທີ່ກັບຄືນມາ ເພື່ອຊອກຫາຕົວຊີ້ວັດຂອງການຄ້າມະນຸດ ໂດຍສະເພາະແມ່ນຜູ້ທີ່ກັບຄືນມາຈາກປະເທດໄທ.

ບັນດາໜ່ວຍງານທີ່ກ່ຽວຂ້ອງໃນປະເທດເພື່ອນບ້ານ ໄດ້ດຳເນີນການກຳນົດຕົວຜູ້ທີ່ຖືກເຄາະຮ້າຍ ເຊິ່ງທັງໝົດເປັນຄົນລາວທີ່ຖືກຂູດຮີດເພື່ອຫາຜົນປະ�โຫຍດໃນຕ່າງປະເທດ. ເຖິງແມ່ນວ່າຈະມີການກ່າວຫາຕໍ່ກັບຄວາມເປັນໄປໄດ້ກ່ຽວກັບການບັງຄັບໃຊ້ແຮງງານຕ່າງດ້າວທີ່ເຮັດວຽກໃນໂຄງການພື້ນຖານໂຄງລ່າງຂະໜາດໃຫຍ່, ອຸດສາຫະກຳບໍ່ແຮ່ ແລະ ຂົງເຂດກະສິກຳໃນປະເທດລາວ, ແລະ ເຖິງແມ່ນວ່າຈະມີອັດຕາສ່ວນຂອງແຮງງານຕ່າງດ້າວທີ່ຕົກເປັນຜູ້ຖືກເຄາະຮ້າຍຂອງການຄ້າມະນຸດເພື່ອການຂູດຮີດທາງເພດ ເຊິ່ງມັກຈະມີສ່ວນກ່ຽວພັນກັບບັນດາອຸດສາຫະກຳເຫຼົ່ານີ້ ແຕ່ ລັດຖະບານບໍ່ໄດ້ດຳເນີນການເພື່ອຄົ້ນຫາ ແລະ ກຳນົດຕົວຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງດ້າວ ໃນໄລຍະເວລາການລາຍງານນີ້. ກະຊວງການຕ່າງປະເທດໄດ້ຈັດການຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່ກົງສຸນທີ່ປະຈຳການຢູ່ປະເທດຈີນ ກ່ຽວກັບວິທີການຈັດການກັບຂໍ້ຮ້ອງຮຽນຕໍ່ກັບການແຕ່ງດອງແອບແຝງ ທີ່ອາດຈະກ່ຽວພັນກັບການຄ້າມະນຸດ ແລະ ວິທີການສົ່ງຕົວຜູ້ຖືກເຄາະຮ້າຍກັບຄືນປະເທດ; ເຖິງຢ່າງໃດກໍ່ຕາມ, ກະຊວງການຕ່າງປະເທດບໍ່ໄດ້ລາຍງານວ່າ ຕົນໄດ້ຝຶກອົບຮົມພະນັກງານທີ່ປະຈຳການໃນປະເທດອື່ນໆກ່ຽວກັບການຄົ້ນຫາ, ລະບຸຕົວ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກຂອງການຄ້າມະນຸດຫຼືບໍ່. ກະຊວງແຮງງານ ແລະ ສະຫວັດດີການສັງຄົມໄດ້ແຕ່ງຕັ້ງຜູ້ຊ່ວຍທູດແຮງງານທີ່ປະເທດໄທ ເຊິ່ງຈະເປັນຜູ້ຕິດຕາມກວດກາສະຖານທີ່ເຮັດວຽກຕ່າງໆ ແຕ່ກໍ່ບໍ່ມີການລາຍງານທີ່ຈະແຈ້ງວ່າຜູ້່ຊ່ວຍທູດແຮງງານເຫຼົ່ານັ້ນໄດ້ຮັບການຝຶກອົບຮົມກ່ຽວກັບການກຳນົດຕົວ ແລະ ດຳເນີນການສົ່ງຕໍ່ກ່ຽວກັບກໍລະນີຂອງການຄ້າມະນຸດຫຼືບໍ່.

ການປ້ອງກັນ

ລັດຖະບານໄດ້ເພີ່ມທະວີຄວາມພະຍາຍາມໃນການປ້ອງກັນການຄ້າມະນຸດ. ໃນເດືອນກໍລະກົດ 2018, ນາຍົກລັດຖະມົນຕີໄດ້ອອກດຳລັດສະບັບໜຶ່ງ ເພື່ອໃຫ້ສິດອຳນາດໃນການສ້າງຕັ້ງຄະນະກຳມະການຊີ້ນຳວຽກງານສະກັດກັ້ນການຄ້າມະນຸດໂດຍປະກອບມີຕົວແທນຈາກຫຼາຍພາກສ່ວນໃນຂັ້ນແຂວງ ແລະ ເມືອງ ເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ສະບັບປີ 2016 ແລະ ແຜນປະຕິບັດງານແຫ່ງຊາດ. ໃນການຜັນຂະຫຍາຍດຳລັດສະບັບນີ້ ລັດຖະບານໄດ້ສະໜັບສະໜູນວຽກງານໂຄສະນາເຜີຍແຜ່ເພື່ອສ້າງຄວາມຮັບຮູ້ກ່ຽວກັບການຄ້າມະນຸດ ແລະ ຈັດກອງປະຊຸມວິຊາການເພື່ອສະໜັບສະໜູນບັນດາໜ່ວຍງານນິຕິກຳ ແລະ ຍຸຕິທຳໃນລະດັບຂັ້ນແຂວງເພື່ອສ້າງຕັ້ງຄະນະກຳມະການຕ້ານການຄ້າມະນຸດຂອງຕົນເອງ. ໃນຄວາມພະຍາຍາມເພື່ອຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ສະຫະພັນແມ່ຍິງລາວ ໄດ້ຈັດກອງປະຊຸມເພື່ອສົ່ງເສີມຄວາມຮັບຮູ້ກ່ຽວ

ກັບການເຄື່ອນຍ້າຍຖິ່ນຖານທີ່ປອດໄພ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນທົ່ວປະເທດໂດຍມີຜູ້ເຂົ້າຮ່ວມທັງໝົດ 1,080 ຄົນ. ໄດ້ມີການສະໜອງການຝຶກອົບຮົມໃຫ້ແກ່ບັນດາເຈົ້າໜ້າທີ່ຂອງພະແນກການທີ່ກ່ຽວຂ້ອງຂອງເມືອງເປົ້າໝາຍ ເຊັ່ນ: ຫ້ອງການປ້ອງກັນຄວາມສະຫງົບ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ, ສະຫະພັນແມ່ຍິງ, ຜູ້ບໍລິຫານໂຮງຮຽນ ແລະ ຫ້ອງການຊາວໜຸ່ມ. ກະຊວງການຕ່າງປະເທດໄດ້ຈັດການຝຶກອົບຮົມເພື່ອເພີ່ມທະວີຄວາມເຂົ້າໃຈຕໍ່ກັບບັນດາສົນທິສັນຍາ ແລະ ອານຸສັນຍາລະດັບພາກພື້ນ ແລະ ສາກົນ ກ່ຽວກັບອາຊະຍາກຳຂ້າມຊາດ ລວມທັງການຄ້າມະນຸດ ໂດຍມີຜູ້ເຂົ້າຮ່ວມທັງໝົດ 352 ຄົນ. ກະຊວງສຶກສາທິການ ແລະ ກີລາ ໄດ້ເປັນເຈົ້າພາບຈັດສຳມະນາຫຼາຍຄັ້ງໃນລະຫວ່າງປີ ເພື່ອຍົກສູງຄວາມຮັບຮູ້ກ່ຽວກັບການຄ້າມະນຸດ ໂດຍແນໃສ່ລະດັບຜູ້ບໍລິຫານພະແນກສຶກສາ ແລະ ກີລາ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 3,710 ຄົນ.

ບັນດາລະບຽບການທີ່ສ້າງຂຶ້ນເພື່ອປ້ອງກັນການຄ້າມະນຸດ, ໃນຄວາມເປັນຈິງແລ້ວ ອາດຈະເພີ່ມຄວາມສ່ຽງຕໍ່ການຄ້າມະນຸດໃຫ້ກັບແຮງງານລາວທີ່ໄປເຮັດວຽກຢູ່ຕ່າງປະເທດ. ລະບຽບການສະບັບໜຶ່ງຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເຊິ່ງໄດ້ຈຳກັດປະເພດການຈ້າງງານສຳລັບແຮງງານລາວທີ່ຈະໄປເຮັດວຽກຢູ່ຕ່າງປະເທດ ອາດຈະເປັນການພັກດັນໃຫ້ແຮງງານຈຳນວນໜຶ່ງເລືອກເສັ້ນທາງອອກນອກປະເທດຜ່ານຊ່ອງທາງທີ່ບໍ່ເປັນທາງການ ເຊິ່ງເປັນການເພີ່ມຄວາມສ່ຽງຂອງພວກເຂົາໃນການຕົກເປັນເຫຍື່ອຂອງຕົວແທນທີ່ບໍ່ເປັນທາງການ ແລະ ພວກຄ້າມະນຸດ. ກະຊວງແຮງງານ ແລະ ສະຫວັດດີການສັງຄົມໄດ້ຄຸ້ມຄອງຕົວແທນ/ບໍລິສັດຈັດຫາງານຈຳນວນ 24 ແຫ່ງ ທີ່ໄດ້ຮັບອະນຸຍາດໃຫ້ຮັບ ແລະ ຈັດຫາງານໃຫ້ແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ; ບົດສຶກສາໜຶ່ງທີ່ດຳເນີນໂດຍອົງການຈັດຕັ້ງສາກົນພົບວ່າ ບັນດາສູນຈັດຫາງານຕ່າງໆໄດ້ສົ່ງຕໍ່ຄ່າທຳນຽມໄປຍັງຜູ້ທີ່ຈະໄປເຮັດວຽກ (ແຮງງານ) ເຊິ່ງນີ້ເປັນການເພີ່ມຄວາມສ່ຽງໃຫ້ແກ່ພວກເຂົາ.

ໃນທາງປະຕິບັດ, ຄວາມພະຍາຍາມຂອງບັນດາກະຊວງທີ່ກ່ຽວຂ້ອງໃນການປ້ອງກັນການຄ້າມະນຸດ ຍັງຄົງບໍ່ມີການປະສານງານທີ່ດີເທົ່າທີ່ຄວນ ຖ່າມກາງບັນດາຂໍ້ຈຳກັດທາງດ້ານຊັບພະຍາກອນ ແລະ ຂໍ້ຈຳກັດຕໍ່ພື້ນທີ່ການປະຕິບັດງານຂອງອົງການຈັດຕັ້ງທາງສັງຄົມ. ບັນດາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ໄດ້ລາຍງານກ່ຽວກັບການເພີ່ມທະວີການຮ່ວມມືກັບລັດຖະບານ; ເຖິງຢ່າງໃດກໍ່ຕາມ, ດຳລັດວ່າດ້ວຍການຈັດຕັ້ງສະມາຄົມທີ່ບໍ່ຫວັງຜົນກຳໄລ (NPAs) ສະບັບປີ 2017 ປະກົດວ່າຈຳກັດການຮ່ວມມືດັ່ງກ່າວ ເຊິ່ງໄດ້ບັງຄັບໃຊ້ຂໍ້ກຳນົດທີ່ຫຍຸ້ງຍາກໃນການລາຍງານ ເຊັ່ນ ຕ້ອງໄດ້ຮັບອະນຸຍາດກ່ອນຈັດຕັ້ງປະຕິບັດກິດຈະກຳທີ່ວາງແຜນໄວ້ ແລະ ຂໍ້ຈຳກັດໃນການຮັບເອົາທຶນຊ່ວຍເຫຼືອຈາກຜູ້ໃຫ້ທຶນສາກົນ. ລັດຖະບານໄດ້ລາຍງານວ່າ ໄດ້ມີການຈັດສັນທຶນສຳລັບກິດຈະກຳຕ້ານການຄ້າມະນຸດໄວ້ໃນງົບປະມານປະຈຳປີຂອງຕົນ, ແຕ່ບໍ່ໄດ້ໃຫ້ຂໍ້ມູນລະອຽດກ່ຽວກັບຈຳນວນຂອງເງິນທຶນ ຫຼື ໄດ້ມີການຈັດສັນເງິນທຶນດັ່ງກ່າວນີ້ແນວໃດ. ໃນເດືອນທັນວາ 2018, ສະພາແຫ່ງຊາດໄດ້ຮັບຮອງເອົາຮ່າງກົດໝາຍວ່າດ້ວຍ ຫ້ອງການຜູ້ຕາງໜ້າລັດຖະບານລາວໃນຕ່າງປະເທດ ເຊິ່ງໄດ້ກຳນົດມາດຕະການລົງโทດສຳລັບສະມາຊິກ ແລະ ພະນັກງານໃນຫ້ອງການທາງການທູດຂອງລາວຜູ້ທີ່ມີສ່ວນຮ່ວມກັບການຄ້າມະນຸດ; ກົດໝາຍສະບັບນີ້ກຳລັງລໍຖ້າການປະກາດນຳໃຊ້ ໃນເວລາທີ່ໃກ້ກັບໄລຍະຂອງການລາຍງານນີ້.

ຂໍ້ມູນໂດຍລວມກ່ຽວກັບການຄ້າມະນຸດ

ຕາມການລາຍງານໃນຊ່ວງໄລຍະຫ້າປີຜ່ານມາ, ພວກຄ້າມະນຸດໄດ້ຂູດຮີດເພື່ອຫາຜົນປະ�โຫຍດຈາກຜູ້ຖືກເຄາະຮ້າຍທີ່ເປັນຄົນລາວໃນຕ່າງປະເທດ, ແລະ ໃນລະດັບທີ່ຕ່ຳກ່ວານັ້ນ ພວກຄ້າມະນຸດໄດ້ຂູດຮີດຜູ້ຖືກເຄາະຮ້າຍທີ່ເປັນຄົນລາວ ແລະ ຊາວຕ່າງດ້າວໃນປະເທດລາວ. ຜູ້ຖືກເຄາະຮ້າຍທີ່ເປັນຄົນລາວ ໂດຍສະເພາະແມ່ນມາຈາກພາກໃຕ້ຂອງປະເທດ ສ່ວນໃຫຍ່ມັກຈະເດີນທາງໄປຕ່າງປະເທດເພື່ອຊອກຫາໂອກາດ ເຊິ່ງພວກເຂົາໄດ້ຖືກພວກຄ້າມະນຸດຂູດຮີດທາງດ້ານແຮງງານ ຫຼື ທາງເພດໃນປະເທດປາຍທາງ ສ່ວນຫຼາຍແມ່ນປະເທດໄທ ແລະ ຈີນ, ນອກນັ້ນກໍ່ມີປະເທດຫວຽດນາມ, ມາເລເຊຍ, ໄຕ້ຫວັນ ແລະ ຍີ່ປຸ່ນ. ຜູ້ຖືກເຄາະຮ້າຍຈຳນວນໜຶ່ງໄດ້ມີການເຄື່ອນຍ້າຍຂ້າມແດນດ້ວຍຄວາມຊ່ວຍເຫຼືອຂອງນາຍໜ້າທີ່ຖືກຕ້ອງຕາມກົດໝາຍ ແລະ ບໍ່ຖືກກົດໝາຍ ເຊິ່ງຮຽກຄ່າທຳນຽມຈາກພວກເຂົາ, ໃນຂະນະທີ່ຜູ້ອື່ນໆໄດ້ຂ້າມແດນດ້ວຍຕົນເອງຜ່ານດ່ານຊາຍແດນທາງການຂອງລາວ ຈຳນວນ 101 ແຫ່ງ ໂດຍນຳໃຊ້ເອກະສານເດີນທາງຢ່າງຖືກຕ້ອງ. ດ່ານຊາຍແດນຫຼາຍແຫ່ງຂອງລາວໄດ້ຖືກບໍລິຫານຈັດການ ແລະ ຄຸ້ມຄອງໂດຍເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງຂັ້ນແຂວງ ຫຼື ເມືອງ ເຊິ່ງໄດ້ຜ່ານການອົບຮົມຢ່າງເປັນທາງການທີ່ໜ້ອຍກ່ວາ ແລະ ມີເວລາປະຕິບັດງານທີ່ ຈຳກັດກ່ວາ ຈຶ່ງເຮັດໃຫ້ດ່ານຊາຍແດນເຫຼົ່ານີ້ກາຍເປັນຈຸດຜ່ານທີ່ງ່າຍດາຍສຳລັບພວກຄ້າມະນຸດ ເພື່ອກະທຳການຕ່າງໆເພື່ອອຳນວຍຄວາມສະດວກໃຫ່ແກ່ການເຄື່ອນຍ້າຍຜູ້ຖືກເຄາະຮ້າຍທີ່ເປັນຄົນລາວເຂົ້າໄປຍັງປະເທດ ເພື່ອນບ້ານ. ບຸກຄົນທີ່ສະໝອງການບໍລິການຂົນສົ່ງໃກ້ຊາຍແດນປະເທດໄທ ໄດ້ອຳນວຍຄວາມສະດວກໃນການຈັດວາງຜູ້ເຄື່ອນຍ້າຍຖິ່ນຖານເພື່ອວັດຖຸປະສົງທາງທຸລະກິດ ໃຫ້ເຂົ້າສູ່ຂະບວນການຄ້າມະນຸດເພື່ອການຂູດຮີດແຮງງານ ຫຼື ທາງເພດໃນປະເທດໄທ. ພວກຄ້າມະນຸດທີ່ເປັນຄົນຕ່າງປະເທດໄດ້ມີການຮ່ວມມືກັບພໍ່ຄ້າຄົນກາງຄົນລາວໃນທ້ອງຖິ່ນຫຼາຍຂຶ້ນເພື່ອ ອຳນວຍຄວາມສະດວກໃຫ້ແກ່ການຄ້າມະນຸດ. ບາງຄັ້ງຄາວຄົນຂັບລົດກໍ່ໄດ້ມີການຂັດຂວາງແຮງງານເຄື່ອນຍ້າຍໃນເວ ລາທີ່ພວກເຂົາຈະກັບຄືນປະເທດລາວ ແລະ ຍັງອຳນວຍຄວາມສະດວກໃນການນຳພາພວກເຂົາກັບຄືນສູ່ການຖືກຄ້າມະ ນຸດນຳອີກ. ຜູ້ຄ້າມະນຸດໃນຊົນນະບົດ ມັກຈະຕົວະຍົວະຄົນຮູ້ຈັກ ແລະ ຍາດພີ່ນ້ອງ ໂດຍສັນຍາວ່າຈະຊອກຫາວຽກເຮັດງານທຳທີ່ຖືກກົດໝາຍໃນປະເທດເພື່ອນບ້ານ, ຫຼັງຈາກນັ້ນກໍ່ບັງຄັບໃຊ້ແຮງງານ ຫຼື ບັງຄັບໃຫ້ຂາຍບໍລິການທາງເພດ.

ພວກຄ້າມະນຸດໄດ້ສະແຫວງຫາຜົນປະ�โຫຍດຈາກຜູ້ຖືກເຄາະຮ້າຍທີ່ເປັນຄົນລາວຈຳນວນຫຼວງຫຼາຍ ໂດຍສະເພາະແມ່ນແມ່ຍິງ ແລະ ເດັກຍິງ ໃນເວລາທີ່ພວກເຂົາຢູ່ໃນປະເທດໄທ ເຊິ່ງໃນນັ້ນລວມມີທັງການບັງຄັບໃຫ້ຂາຍບໍລິການທາງເພດ ແລະ ຖືກນຳໃຊ້ເປັນແຮງງານບັງຄັບໃນເຮືອນ, �โຮງງານ ຫຼື ໃນຂົງເຂດວຽກງານກະສິກຳ. ພວກຄ້າມະນຸດໄດ້ສະແຫວງຫາຜົນປະ�โຫຍດຈາກຜູ້ຖືກເຄາະຮ້າຍທີ່ເປັນເພດຊາຍ ແລະ ເດັກຊາຍຄົນລາວໂດຍນຳໃຊ້ເປັນແຮງງານບັງຄັບໃນວຽກງານປະມົງໃນປະເທດໄທ ລວມທັງຂົງເຂດວຽກງານກໍ່ສ້າງ ແລະ ອຸດສາຫະກຳການກະເສດ. ມີຜູ້ຍິງ ແລະ ເດັກຍິງຈຳນວນໜຶ່ງຈາກປະເທດລາວ ຖືກຂາຍເພື່ອໄປເປັນເຈົ້າສາວທີ່ປະເທດຈີນ ແລະ ຖືກສົ່ງຕໍ່ເຂົ້າສູ່ຂະບວນການຄ້າມະນຸດເພື່ອການຂູດຮີດທາງເພດ ຫຼື ຖືກບັງຄັບໃຫ້ເປັນຂ້າທາດຮັບໃຊ້ໃນເຮືອນ. ມີລາຍງານວ່າມີເຈົ້າໜ້າທີ່ທ້ອງຖິ່ນຈຳນວນໜຶ່ງມີສ່ວນຮ່ວມໃນການສ້າງຊ່ອງว່າງໃຫ້ຂະບວນການຄ້າມະນຸດໂດຍການຮັບເອົາຄ່າຈ້າງເພື່ອອຳນວຍຄວາມສະດວກໃຫ້ແກ່ການຂ້າມແດນຂອງພວກເດັກຍິງເພື່ອເດີນທາງໄປປະເທດຈີນ.

ມີລາຍງານວ່າ ປະເທດລາວເປັນໜຶ່ງໃນປະເທດທາງຜ່ານສຳລັບຜູ້ຍິງ ແລະ ເດັກຍິງຊາວຫວຽດນາມ ແລະ ຈີນ ທີ່ຕົກເປັນຜູ້ຖືກເຄາະຮ້າຍຂອງການຄ້າມະນຸດເພື່ອການຂູດຮີດທາງເພດ ແລະ ແຮງງານບັງຄັບໃນບັນດາປະເທດເພື່ອນບ້ານ

ໂດຍສະເພາະແມ່ນປະເທດໄທ. ເຊັ່ນດຽວກັນພວກຄ້າມະນຸດເພື່ອຈຸດປະສົງການຂູດຮີດທາງເພດຍັງໄດ້ມີການຂູດຮີດເພື່ອສະແຫວງຫາຜົນປະໂຫຍດຈາກຜູ້ຍິງ ແລະ ເດັກຍິງທີ່ເປັນຄົນສັນຊາດຈີນ ໃນປະເທດລາວນຳອີກ. ຜູ້ຊາຍ ແລະ ຜູ້ຍິງຊາວຫວຽດນາມຈຳນວນໜຶ່ງທີ່ເຮັດວຽກຢູ່ໃນ ຫຼື ໃກ້ກັບພື້ນທີ່ຕັດໄມ້ທ່ອນ ແລະ ການກໍ່ສ້າງ (ສ່ວນໃຫຍ່ແມ່ນບໍ່ຖືກກົດໝາຍ) ຕາມຊາຍແດນລາວ-ຫວຽດນາມ ອາດຈະຕົກເປັນຜູ້ຖືກເຄາະຮ້າຍຂອງການຄ້າມະນຸດ. ມີລາຍງານວ່າ ມີຄົນພະມ້າຈຳນວນໜຶ່ງທີ່ເຮັດວຽກໃນຮູບແບບຜູ້ໃຊ້ແຮງງານ ຫຼື ມີສ່ວນຮ່ວມໃນການຄ້າປະເວນີໃນບໍລິເວນໃກ້ກັບພື້ນທີ່ສ່ວນທີ່ເປັນຂອງລາວໃນບໍລິເວນ "ສາມຫຼ່ຽມຄຳ"—ເຊິ່ງເປັນພື້ນທີ່ທາງພູມີສາດທີ່ຖືກສ້າງເຄື່ອງໝາຍໂດຍຈຸດຕັດກັນຂອງຊາຍແດນລະຫ່ວາງສາມປະເທດລາວ, ພະມ້າ ແລະ ໄທ - ພວກເຂົາເຫຼົ່ານັ້ນອາດຈະເປັນຜູ້ຖືກເຄາະຮ້າຍຂອງການຄ້າມະນຸດ ແລະ ມີຄວາມສ່ຽງສູງຕໍ່ການຄ້າມະນຸດເນື່ອງຈາກການໄດ້ຮັບຄ່າຈ້າງຕ່ຳ ແລະ ໄດ້ຮັບການປົກປ້ອງທາງກົດໝາຍພຽງເລັກນ້ອຍພາຍໃນປະເທດລາວ.

ສວນພືດກະສິກຳ ແລະ ເຂດເສດຖະກິດພິເສດຍັງຄົງສືບຕໍ່ດຶງດູດແຮງງານຈາກນອກປະເທດ ໂດຍສະເພາະແມ່ນບໍລິສັດຂອງຈີນ ໄດ້ນຳເອົາຊາວຕ່າງຊາດນັບພັນຄົນເຂົ້າມາເຮັດວຽກໃນເຂດໂຄງການຂອງພວກເຂົາ. ມີລາຍງານວ່າການເພີ່ມຂຶ້ນຂອງຈຳນວນບໍລິສັດທີ່ຄົນຈີນ ແລະ ຄົນຫວຽດນາມເປັນເຈົ້າຂອງໄດ້ອຳນວຍຄວາມສະດວກໃຫ້ແກ່ການເຂົ້າປະເທດໂດຍບໍ່ມີການລົງທະບຽນຂອງບັນດາແຮງງານເຄື່ອນຍ້າຍຈາກປະເທດຕົ້ນທາງເຂົ້າມາໃນປະເທດລາວ ລວມທັງການໃຫ້ຄວາມຊ່ວຍເຫຼືອທີ່ອາດເປັນໄປໄດ້ຈາກເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງຂອງລາວຜູ້ທີ່ມີສ່ວນໃນການສໍ້ລາດບັງຫຼວງ. ໂດຍການກຳກັບດູແລທີ່ບໍ່ພຽງພໍຈາກເຈົ້າໜ້າທີ່ໃນທ້ອງຖິ່ນ, ບັນດາແຮງງານທີ່ເຂົ້າມາເຫຼົ່ານີ້ ມີຄວາມສ່ຽງທີ່ຈະຖືກນຳໃຊ້ເປັນແຮງງານບັງຄັບໃນຂົງເຂດວຽກງານອຸດສາຫະກຳບໍ່ແຮ່, ເຂື່ອນໄຟຟ້າພະລັງງານນ້ຳ ແລະ ສວນກະສິກຳ. ນອກຈາກນີ້ ປະຊາຊົນໃນຊຸມຊົນລາວຈຳນວນໜຶ່ງອາດຈະມີຄວາມສ່ຽງຕໍ່ການຖືກຂູດຮີດແຮງງານ ລວມທັງການເປັນແຮງງານບັງຄັບໃນຂົງເຂດວຽກງານກໍ່ສ້າງທີ່ກຳລັງດຳເນີນໂຄງການສ້າງເສັ້ນທາງລົດໄຟ ເພື່ອເຊື່ອມຕໍ່ປະເທດຈີນ ແລະ ສປປ ລາວ ລວມທັງບັນດາແຮງງານເຄື່ອນຍ້າຍຊາວຈີນຈຳນວນຫຼາຍທີ່ຖືກນຳເຂົ້າມາປະເທດລາວສຳລັບໂຄງການນີ້. ແຮງງານລາວມີຄວາມສ່ຽງເພີ່ມຂຶ້ນທີ່ຈະກາຍເປັນແຮງງານບັງຄັບພາຍໃນປະເທດລາວເອງ ເນື່ອງຈາກວ່າພວກເຂົາໄດ້ມີການເຄື່ອນຍ້າຍຖິ່ນຖານພາຍໃນເພື່ອສະແຫວງຫາໂອກາດທາງດ້ານວຽກເຮັດງານທຳໃນໂຄງການລົງທຶນຂອງຕ່າງປະເທດ; ພົນລະເມືອງຈະໄດ້ຮັບການບໍລິການຈາກພາກລັດໂດຍອີງຕາມການລົງທະບຽນຂອງພວກເຂົາໃນແຂວງຂອງພວກເຂົາເອງ ແລະ ຖ້າພວກເຂົາບໍ່ມີເອກະສານ ຫຼື ບໍ່ໄດ້ລົງທະບຽນກໍ່ຈະບໍ່ສາມາດໄດ້ຮັບການບໍລິການສຳລັບພວກເຂົາເອງ ຫຼື ສຳລັບຄົນໃນຄອບຄົວຂອງພວກເຂົາໃນແຂວງອື່ນໆ ພາຍໃນປະເທດລາວ ຖ້າບໍ່ມີການຊ່ວຍເຫຼືອຢ່າງເປັນທາງການຈາກນາຍຈ້າງຂອງພວກເຂົາໃນການລົງທະບຽນ, ອາດເປັນໄປໄດ້ທີ່ພວກເຂົາຈະຖືກປ່ອຍປະໃຫ້ຂຶ້ນຢູ່ກັບຄວາມເມດຕາຂອງນາຍຈ້າງທີ່ບໍ່ມີສິນທຳ. ພວກຄ້າມະນຸດໄດ້ຂູດຮີດຜູ້ຖືກເຄາະຮ້າຍທີ່ເປັນຜູ້ຍິງ ແລະ ເດັກຍິງຄົນຫວຽດນາມ, ຈີນ ແລະ ລາວ ຜ່ານຮູບແບບການຄ້າມະນຸດເພື່ອການຂູດຮີດທາງເພດໃນບັນດາຕົວເມືອງໃຫຍ່ຕ່າງໆ ແລະ ໃນເຂດພື້ນທີ່ໃກ້ຊາຍແດນ, ບ່ອນຫຼິ້ນການພະນັນ (ຄາຊິໂນ) ແລະ ເຂດເສດຖະກິດພິເສດ ໂດຍສະເພາະແມ່ນເຂດພື້ນທີ່ທີ່ມີການລົງທຶນຢ່າງຫຼວງຫຼາຍຂອງນັກທຸລະກິດຈີນ, ມີລາຍງານວ່າເຂດພື້ນທີ່ເຫຼົ່ານີ້ສາມາດຕອບສະໜອງຕໍ່ຄວາມຕ້ອງການຂອງນັກທ່ອງທ່ຽວຊາວອາຊີ ແລະ ບັນດາແຮງງານເຄື່ອນຍ້າຍ. ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານຈຳນວນໜຶ່ງໄດ້ຄາດຄະເນວ່າ ມີ 13,000 ຄົນທີ່ຄ້າປະເວນີໃນສະຖານປະກອບການຂອງລາວ ແລະ ພວກເຂົາເຫຼົ່ານີ້ມີຄວາມເປັນໄປໄດ້ທີ່ຈະຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດເພື່ອການຂູດຮີດທາງເພດ, ໃນນີ້ຄາດວ່າມີຈຳນວນສາມເທົ່າຂອງຕົວເລກຂ້າງເທິງນີ້ ທີ່ກຳລັງປະກອບການຄ້າປະເວນີໃນຮູບແບບອິດສະຫຼະໃນທົ່ວປະເທດ. ບັນດາອົງການຈັດຕັ້ງສາກົນສັງ

ເກດເຫັນວ່າ ລະບຽບການ/ຂັ້ນຕອນການລົງທະບຽນການເກີດທີ່ບໍ່ພຽງພໍ ຫຼື ທີ່ບໍ່ເປັນທາງການ ເຮັດໃຫ້ 30 ສ່ວນຮ້ອຍ ຂອງພົນລະເມືອງລາວບໍ່ມີເອກະສານລະບຸຕົວຕົນ, ນີ້ເປັນການເພີ່ມຄວາມສ່ຽງສຳລັບພວກເຂົາທີ່ຈະຖືກນຳໃຊ້ເພື່ອສະແຫວງຫາຜົນປະ�โຫຍດ. ບັນດາຊຸມຊົນທີ່ຕັ້ງຖິ່ນຖານຄືນໃໝ່ເນື່ອງຈາກການກໍ່ສ້າງເຂື່ອນໄຟຟ້າ ແລະ ເນື່ອງຈາກການພັງທະລາຍຂອງສັນເຂື່ອນເຊປຽນ-ເຊນ້ຳນ້ອຍ ໃນເດືອນກໍລະກົດ 2018 ອາດຈະເປັນເຫດໃຫ້ເກີດມີຄວາມສ່ຽງຕໍ່ການຄ້າມະນຸດ. ລາຍງານລະບຸໄວ້ວ່ານັກທ່ອງທ່ຽວຈາກປະເທດອັງກິດ, ອິດສະຕາລີ ແລະ ອາເມລິກາ ໄດ້ເດີນທາງເຂົ້າມາປະເທດລາວ ເພື່ອສະແຫວງຫາຜົນປະ�โຫຍດຈາກເດັກຜູ້ທີ່ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອການຊຸດຮີດທາງເພດຕໍ່ເດັກ.